ວັກຊີນໂຄວິດ-19

# ຮູ້ຄວາມຈິງ.

ປົກປ້ອງລູກຂອງທ່ານ. ປ້ອງກັນຊຸມຊົນຂອງທ່ານ.

ປັດຈຸບັນນີ້
ມີໃຫ້ສຳລັບຄົນທີ່ມີ
ອາຍຸ 12 ຂຶ້ນໄປ

## ເດັກນ້ອຍ ແລະ ຊາວໜຸ່ມຈະປອດໄພທີ່ສຸດເມື່ອພວກເຂົາໄດ້ຮັບຢາວັກຊີນ.

ວັກຊີນປ້ອງກັນທຸກຄົນ, ລວມທັງເດັກນ້ອຍ ແລະ ຊາວໜຸ່ມ, ຈາກການເປັນໂຄວິດ-19. ຢາວັກຊີນຍັງປ້ອງກັນເດັກນ້ອຍ ແລະ ຊາວໜຸ່ມຈາກການເຈັບປ່ວຍຂັ້ນຮຸນແຮງຖ້າພວກເຂົາເຈັບປ່ວຍ.

ມີພະຍາດໂຄວິດ-19 ສາຍພັນໃໝ່, ລວມທັງສາຍພັນເດວຕ້າ, ຊຶ່ງມັນສາມາດແຜ່ລະບາດໄດ້ງ່າຍ ແລະ ອາດຈະເຮັດໃຫ້ເກີດອາການຮຸນແຮງຂຶ້ນໄດ້. ວັກຊີນສາມາດປ້ອງກັນສາຍພັນເດວຕ້າໄດ້.



## ປອດໄພ ແລະ ມີປະສິດທິພາບ

- ບໍ່ມີວັກຊີນຊະນິດໃດໄດ້ຖືກທົດສອບຄວາມປອດໄພຫຼາຍຄືແນວນີ້ ໃນປະຫວັດສາດຂອງສະຫະລັດ.
- ຢາວັກຊີນໄດ້ຖືກພິສູດວ່າປອດໄພສຳລັບເດັກນ້ອຍ, ຊາວໜຸ່ມ ແລະ ຜູ້ໃຫຍ່ ລວມທັງ ກຸ່ມຄົນທີ່ມີຫຼາກຫຼາຍເຊື້ອຊາດ, ຊົນເຜົ່າ ແລະ ອາຍຸ.
- ບໍ່ມີຫຼັກຖານທີ່ວ່າວັກຊີນຈະເຮັດໃຫ້ລູກຂອງທ່ານບໍ່ມີລູກໃນອານາຄົດ.

## ວັກຊີນຟຣີສຳລັບທຸກຄົນ

- ທ່ານ ແລະ ລູກຂອງທ່ານສາມາດຮັບຢາວັກຊີນຟຣີໂດຍບໍ່ຄຳນຶງເຖິງ **ສະຖານະພາບການເຂົ້າເມືອງ**.
- ບໍ່ວ່າຈະເປັນທ່ານເອງ ຫຼື ລູກຂອງທ່ານ ບໍ່ຈຳເປັນຕ້ອງ **ສະແດງບັດປະຈຳຕົວ** ຫຼື ມີ **ປະກັນໄພສຸຂະພາບ** ເພື່ອຮັບຢາວັກຊີນຟຣີ.

## ການສັກຢາໃຫ້ເດັກນ້ອຍ ແລະ ຊາວໜຸ່ມ ຈະຊ່ອຍໃນການປ້ອງກັນທີ່ອຊຸມຊົນ.

ເມື່ອມີບາງຄົນໄດ້ຮັບຢາວັກຊີນ, ການແຜ່ລະບາດພະຍາດໂຄວິດ-19 ໃຫ້ກັບຄົນອື່ນແມ່ນຍາກຂຶ້ນ. ເມື່ອເດັກນ້ອຍທີ່ມີສິດໄດ້ຮັບຢາວັກຊີນມັນຈະປ້ອງກັນ:

- ໝູ່ເພື່ອນ ແລະ ຄອບຄົວຂອງພວກເຂົາຜູ້ທີ່ຍັງບໍ່ທັນໄດ້ຮັບການສັກຢາວັກຊີນ.
- ຜູ້ສູງອາຍຸ ແລະ ຄົນທີ່ມີພະຍາດປະຈຳຕົວທີ່ມີຄວາມສ່ຽງສູງທີ່ຈະເປັນພະຍາດທີ່ຮຸນແຮງຈາກການເປັນໂຄວິດ-19.

ຖ້າວ່າເດັກນ້ອຍ ແລະ ຜູ້ໃຫຍ່ໄດ້ຮັບວັກຊີນເປັນຈຳນວນຫຼາຍ, ມັນຍັງຈະຊ່ອຍໃຫ້ໂຮງຮຽນ ແລະ ທຸລະກິດສາມາດເປີດກິດຈະການໄດ້.

NRC-RIM
National Resource Center for Refugees, Immigrants, and Migrants

ສຳລັບຂໍ້ມູນເພີ່ມເຕີມ: cdc.gov/coronavirus

# ສິ່ງທີ່ຄາດຫວັງ

## ເມື່ອລູກຂອງທ່ານໄດ້ຮັບວັກຊີນຕ້ານໂຄວິດ-19, ພວກເຂົາສາມາດກັບໄປສູ່ກິດກະຈໍາປົກກະຕິຂອງພວກເຂົາ ເຊັ່ນ ການເຂົ້າໂຮງຮຽນ, ການຫຼິ້ນກິລາ, ແລະ ຢ້ຽມຢາມໝູ່ເພື່ອນ ແລະ ຄອບຄົວຢ່າງໄດ້ປອດໄພ.



**ຢູ່ບ່ອນນັດໝາຍ:**

- ກ່ອນທີ່ນາງພະຍາບານ ຫຼື ທ່ານໝໍຈະສັກຢາວັກຊີນໃຫ້ແກ່ລູກຂອງທ່ານ, ພວກເຂົາຈະບອກທ່ານກ່ຽວກັບຢາວັກຊີນ, ທົບທວນເບິ່ງປະຫວັດການປິ່ນປົວສຸຂະພາບຂອງລູກທ່ານ ແລະ ກໍ່ຈະສອບຖາມທ່ານຄືກັນຖ້າທ່ານມີຄໍາຖາມ.
- ລູກຂອງທ່ານຈະຕ້ອງພັກເປັນເວລາ 15–30 ນາທີ ເພື່ອໃຫ້ແນ່ໃຈວ່າພວກເຂົາບໍ່ແພ້ຢາ.



## ຜົນຂ້າງຄຽງລະດັບກາງແມ່ນເລື່ອງປົກກະຕິ

ຜົນຂ້າງຄຽງບໍ່ໝາຍຄວາມວ່າລູກຂອງທ່ານຈະເປັນໂຄວິດ-19.

ຜົນຂ້າງຄຽງ ໝາຍເຖິງວັກຊີນກໍາລັງສອນຮ່າງກາຍຂອງລູກທ່ານໃຫ້ຕໍ່ສູ້ກັບໂຄວິດ-19 ໄດ້ແນວໃດ.

ຜົນຂ້າງຄຽງອາດຈະປະກອບດ້ວຍ:

- ☐ ປວດແຂນ ຫຼື ແຂນໃຄ່ ຢູ່ບ່ອນທີ່ສັກວັກຊີນ
- ☐ ເມື່ອຍ
- ☐ ເຈັບຫົວ
- ☐ ປວດກ້າມຊີ້ນ
- ☐ ໜາວສັ່ນ
- ☐ ເປັນໄຂ້
- ☐ ປວດ



## ຜົນຂ້າງຄຽງທີ່ຮຸນແຮງແມ່ນເກີດຂຶ້ນໄດ້ຍາກ

**ວັກຊີນແມ່ນປອດໄພ. ລູກຂອງທ່ານຈະເຈັບປ່ວຍຂັ້ນຮຸນແຮງຈາກການເປັນໂຄວິດ-19 ຫຼາຍກວ່າການສັກຢາວັກຊີນ.**

ໄວລຸ້ນຈໍານວນໜ້ອຍທີ່ມີປະສົບກັບຜົນຂ້າງຄຽງເຊັ່ນ ຫົວໃຈອັກເສບ (ເອີ້ນວ່າ ກ້າມຊີ້ນຫົວໃຈອັກເສບ - myocarditis ຫຼື ເຫຍື່ອຫຸ້ມຫົວໃຈອັກເສບ - pericarditis) ຫຼື ເລືອດກ້າມ.

- ຜົນຂ້າງຄຽງຂັ້ນຮຸນແຮງ **ພົບເຫັນໄດ້ຍາກ**
- ຜົນຂ້າງຄຽງຂັ້ນຮຸນແຮງ **ສາມາດປິ່ນປົວໄດ້** ແລະ ຄົນສ່ວນຫຼາຍທີ່ມີອາການເຫຼົ່ານັ້ນແມ່ນປິ່ນປົວເຊົາແລ້ວ
- ປະໂຫຍດຂອງວັກຊີນແມ່ນດີກວ່າຜົນຂ້າງຄຽງຂອງມັນ

## ສອບຖາມທ່ານໝໍເພື່ອຂໍ້ມູນເພີ່ມເຕີມ

ບອກໃຫ້ທ່ານໝໍ ແລະ ນາງພະຍາບານຂອງລູກທ່ານເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບວັກຊີນໂຄວິດ-19 ແລະ ວັກຊີນອື່ນໆທີ່ລູກຂອງທ່ານອາດຈະໄດ້ຮັບ.

NRC-RIM
National Resource Center for Refugees, Immigrants, and Migrants

**ສໍາລັບຂໍ້ມູນເພີ່ມເຕີມ: cdc.gov/coronavirus**